ລັດຄາລິຟໍເນຍ—ອົງການບໍລິການສຸຂະພາບ ແລະ ມະນຸດ
**ພະແນກພັດທະນາການບໍລິການ**
1215 O Street, Sacramento, CA 95814
www.dds.ca.gov

NANCY BARGMANN
*ຜູ້ອໍານວຍການ*

GAVIN NEWSOM
*ຜູ້ວ່າການລັດ*

1 ກໍລະກົດ 2024

ເຖິງ: ບັນດາຜູ້ອໍານວຍການສູນພາກພື້ນ

ເລື່ອງ: ໂຄງການກໍານົດດ້ວຍຕົນເອງ:
ບົດລາຍງານປະຈໍາປີຂອງສູນພາກພື້ນກ່ຽວກັບຄະນະກໍາມະການທີ່ປຶກສາອາສາສະຫມັກທ້ອງຖິ່ນ

ໃນເດືອນກໍລະກົດ 2021, ຮ່າງກົດໝາຍວ່າດ້ວຍງົບປະມານການບໍລິການດ້ານພັດທະນາການ, AB 136 (ພາກ 76, ລັດຖະບັນຍັດຂອງປີ 2021) ໄດ້ມີການປັບປຸງລະບຽບສະຫວັດດີການ ແລະ ສະຖາບັນ (WIC), ມາດຕາ 4685.8(w)(1) ເພື່ອລວມເອົາຂໍ້ກໍານົດເພີ່ມເຕີມສໍາລັບອົງປະກອບຂອງຄະນະກໍາມະການຂອງສູນກາງພາກພື້ນ ໃນໂຄງການກໍານົດດ້ວຍຕົນເອງ (SDP) ໃຫ້ມີຄະນະກໍາມະການທີ່ປຶກສາອາສາສະຫມັກທ້ອງຖິ່ນ. ຈຸດປະສົງຂອງຈົດໝາຍສະບັບນີ້ແມ່ນເພື່ອໃຫ້ຄໍາແນະນໍາໃນການປະຕິບັດຂໍ້ກໍານົດເຫຼົ່ານີ້.

<u>ບົດລາຍງານຂອງສູນພາກພື້ນກ່ຽວກັບຄະນະກໍາມະການທີ່ປຶກສາອາສາສະຫມັກທ້ອງຖິ່ນ (Local Volunteer Advisory Committee, LVAC)</u>

ຂໍ້ກໍານົດສໍາລັບອົງປະກອບຂອງຄະນະກໍາມະການ LVAC ມີດັ່ງນີ້:

1. ສູນພາກພື້ນ ແລະ ສະພາຄົນພິການດ້ານພັດທະນາການຂອງລັດຈະແຕ່ງຕັ້ງເຄິ່ງໜຶ່ງຂອງສະມາຊິກຂອງຄະນະກໍາມະການ, ເຊິ່ງຈະປະກອບດ້ວຍບຸກຄົນທີ່ຮັບໃຊ້, ສະມາຊິກຄອບຄົວ, ຜູ້ສະໜັບສະໜູນອື່ນໆ ແລະ ບັນດາຜູ້ນໍາຊຸມຊົນ.
2. ນອກຈາກສະມາຊິກທີ່ໄດ້ຖືກແຕ່ງຕັ້ງຂອງຄະນະກໍາມະການດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ຄະນະກໍາມະການຈະຕ້ອງປະກອບມີຜູ້ສະຫນັບສະຫນູນສິດຂອງລູກຄ້າຂອງພາກພື້ນແລະຕົວແທນຈາກສູນຊັບພະຍາກອນຄອບຄົວ.
3. ຄະນະກໍາມະການສ່ວນໃຫຍ່ຈະເປັນບຸກຄົນທີ່ຮັບໃຊ້ບຸກຄົນ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ.
4. ຄະນະກໍາມະການຈະຕ້ອງມີຄວາມຫຼາກຫຼາຍທາງດ້ານວັດທະນະທໍາ ແລະ ຮູບແບບທີ່ຕັ້ງພູມສັນຖານຂອງຂອບເຂດພື້ນທີ່ຂອງສູນພາກພື້ນ.

ລັດຖະບັນຍັດຮຽກຮ້ອງໃຫ້ສູນພາກພື້ນຢືນຢັນເປັນລາຍລັກອັກສອນໃນແຕ່ລະປີ, ວ່າ LVAC ຍັງສອດຄ່ອງຕາມເງື່ອນໄຂຂອງກົດຫມາຍດັ່ງຕໍ່ໄປນີ້:

1. ຊື່ຂອງຄະນະກໍາມະການແຕ່ລະຄົນ, ຕໍາແໜ່ງຕາມກົດໝາຍທີ່ເຂົາເຈົ້າປະກອບເຂົ້າໃນຄະນະກໍາມະການ ແລະ ໜ່ວຍງານໃດທີ່ແຕ່ງຕັ້ງເຂົາເຈົ້າຕໍ່ຄະນະກໍາມະການ,
2. ຊື່ ແລະ ຕໍາແໜ່ງວຽກຂອງການພົວພັນສູນພາກພື້ນກັບ LVAC ແລະ
3. ລາຍລະອຽດກ່ຽວກັບອົງປະກອບຂອງຄະນະກໍາມະການສະທ້ອນໃຫ້ເຫັນເຖິງຄວາມຫຼາກຫຼາຍທາງດ້ານວັດທະນະທໍາ ແລະ ຂໍ້ມູນພູມສັນຖານຂອງຂອບເຂດພື້ນທີ່ຂອງສູນພາກພື້ນ.

ພະແນກບໍລິການດ້ານພັດທະນາການ (ພະແນກ) ຈະກະກຽມແຜ່ລັກຟອມການລາຍງານໃຫ້ແກ່ບັນດາສູນພາກພື້ນລ່ວງໜ້າກ່ອນວັນວັນທີກໍານົດ.

ກ່ອນວັນທີ 1 ສິງຫາ 2024 ແລະ ເປັນປະຈຳປີ, ສູນພາກພື້ນຈະຕ້ອງສົ່ງບົດລາຍງານຂອງຕົນໄປໃຫ້ພະແນກທີ່ sdp@dds.ca.gov.

ຖ້າຜູ້ເຂົ້າຮ່ວມ ແລະ/ຫຼື ຄອບຄົວຂອງເຂົາເຈົ້າມີຄຳຖາມກ່ຽວກັບຈົດໝາຍນີ້, ເຂົາເຈົ້າຄວນຕິດຕໍ່ກັບສູນພາກພື້ນຂອງເຂົາເຈົ້າ. ຄຳຖາມຈາກສູນພາກພື້ນຄວນຈະຖືກສົ່ງໄປຫາ sdp@dds.ca.gov.

ດ້ວຍຄວາມເຄົາລົບ,

*ຕົ້ນສະບັບລົງນາມໂດຍ:*

BRIAN WINFIELD
ຮອງຫົວໜ້າຜູ້ອຳນວຍການ

ສຳເນົາເຖິງ: ບັນດາຜູ້ບໍລິຫານໃນສູນພາກພື້ນ
ບັນດາຜູ້ອຳນວຍການສູນພາກພື້ນຂອງການບໍລິການຜູ້ບໍລິໂພກ
ບັນດາຜູ້ອຳນວຍການຝ່າຍບໍລິການຊຸມຊົນຂອງສູນພາກພື້ນ
ບັນດາສະມາຄົມໜ່ວຍງານຂອງຂອງສູນພາກພື້ນ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ
Nancy Bargmann, ພະແນກບໍລິການດ້ານພັດທະນາການ
Carla Castañeda, ພະແນກບໍລິການດ້ານພັດທະນາການ
Ernie Cruz, ພະແນກບໍລິການດ້ານພັດທະນາການ
Jim Knight, ພະແນກບໍລິການດ້ານພັດທະນາການ
Kathleen Dempsey, ພະແນກບໍລິການດ້ານພັດທະນາການ